ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

-----------------------

ຄະນະກຳມະການປະສານງານລະດັບຊາດ

ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ

ເລກທີ 000090 /ຄປຊ

ນະຄອນຫຼວງວຽງຈັນ, ວັນທີ 08 JAN 2013

# ຂໍ້ຕົກລົງ
# ວ່າດ້ວຍກົນໄກຊຸກຍູ້ການສະໜອງຂໍ້ມູນຂ່າວສານທາງດ້ານການຄ້າ

– ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ ສະບັບເລກທີ 118/ນຍ, ລົງວັນທີ 11 ກໍລະກົດ 2008;

– ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການແຈ້ງ ແລະ ການສະໜອງຂໍ້ມູນ ທີ່ຕິດພັນກັບການຄ້າ ສະບັບເລກທີ 363/ນຍ, ລົງວັນທີ 19 ສິງຫາ 2010;

– ອີງຕາມ ດຳລັດວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນຍຸດທະສາດການອຳນວຍຄວາມສະດວກທາງດ້ານການຄ້າ ຂອງ ສປປ ລາວ ໃນໄລຍະແຕ່ ປີ 2011 ຫາ 2015 ສະບັບເລກທີ 213/ລບ, ລົງວັນທີ 18 ກໍລະກົດ 2011;

– ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ ສະບັບເລກທີ 023/ຄປຊ, ລົງວັນທີ 20 ຕຸລາ 2010.

## ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ, ປະທານຄະນະກຳມະການປະສານງານລະດັບຊາດວ່າດ້ວຍ ການເຊື່ອມໂຍງເສດຖະກິດກັບສາກົນ ອອກຂໍ້ຕົກລົງ:

## ໝວດທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ວາງອອກເພື່ອ ກຳນົດ ກົນໄກຊຸກຍູ້ການສະໜອງຂໍ້ມູນຂ່າວສານທາງດ້ານການຄ້າ ລະຫວ່າງ ຫ້ອງການປະຈຳ ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ (ກຂອຄ) ທີ່ເປັນຈຸດທີ່ຕັ້ງຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າ (Lao PDR Trade Portal) ກັບ ບັນດາສະມາຊິກ ກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ໃນການສະໜອງຂໍ້ມູນຂ່າວສານທາງດ້ານການຄ້າ ໃຫ້ມີຄວາມຖືກຕ້ອງ ຄົບຖ້ວນ ເພື່ອເອົາລົງເຜີຍແຜ່ໃນສູນຂໍ້ມູນຂ່າວສານທາງດ້ານການຄ້າ ໃຫ້ທັນກັບສະພາບ.

ມາດຕາ 2. ຄວາມໝາຍຂອງ ກົນໄກປະສານງານ

ໝາຍເຖິງ ການພົບປະແລກປ່ຽນ, ການສະໜອງຂໍ້ມູນຂ່າວສານທາງດ້ານການຄ້າ ລວມທັງການສະຫຼຸບລາຍງານ ຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ລະຫວ່າງ ຫ້ອງການປະຈຳ ກຂອຄ ກັບ ບັນດາສະມາຊິກ ກຂອຄ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ ເພື່ອຮັບປະກັນຄວາມຖືກຕ້ອງຂອງຂໍ້ມູນ, ສະດວກ ວ່ອງໄວ, ເປັນປົກກະຕິ ແລະ ມີຄວາມຍືນຍົງ.

ມາດຕາ 3. ຄວາມໝາຍຂອງ ສູນຂໍ້ມູນຂ່າວສານທາງດ້ານການຄ້າ

ໝາຍເຖິງ ຈຸດສັງລວມ ແລະ ເກັບຮັກສາຂໍ້ມູນຂ່າວສານທາງດ້ານການຄ້າ ເພື່ອສະໜອງ ແລະ ເຜີຍແຜ່ ສູ່ສາທາລະນະຊົນ ໂດຍຜ່ານເວັບໄຊ໌ www.laotradeportal.gov.la, www.laotradeportal.org ແລະ www.laoradeportal.com ຊຶ່ງຕັ້ງຢູ່ ຫ້ອງການປະຈຳ ກຂອຄ.

ມາດຕາ 4. ຄວາມໝາຍຂອງ ຂໍ້ມູນຂ່າວສານທາງດ້ານການຄ້າ

ໝາຍເຖິງ ບັນດາກົດໝາຍ, ລະບຽບການ, ຂັ້ນຕອນ, ມາດຕະການດ້ານການຄ້າທີ່ບໍ່ແມ່ນພາສີ, ປະກາດແຈ້ງການ ລວມທັງແບບຟອມ, ລະຫັດ ແລະ ອັດຕາພາສີ, ບັນຊີສິນຄ້າ, ຄຳສັ່ງແນະນຳ ທີ່ກຳລັງຮ່າງ, ຖືກຮັບຮອງ ແລະ ນຳໃຊ້ໃນຂອບເຂດທົ່ວປະເທດ. ລວມທັງຂ່າວສານ ຫລື ບົດຂ່າວ ແລະ ຂໍ້ມູນອື່ນ ທີ່ກ່ຽວກັບ ການນຳເຂົ້າ ແລະ ສົ່ງອອກຂອງທັງພາຍໃນ ແລະ ຕ່າງປະເທດ ທີ່ບັນດາສະມາຊິກ ກຂອຄ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຕ້ອງໄດ້ເຜີຍແຜ່ອອກສູ່ສາທາລະນະຊົນ.

ມາດຕາ 5. ທີ່ຕັ້ງ ແລະ ພາລະບົດບາດ

5.1 ຫ້ອງການປະຈຳ ກຂອຄ ມີທີ່ຕັ້ງຢູ່ ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຈຸດປະສານງານຂອງ ກຂອຄ ໃນການປະຕິບັດວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ທີ່ໄດ້ລະບຸໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບເລກທີ 023/ຄປຊ, ລົງວັນທີ 20 ຕຸລາ 2010;

5.2 ສະມາຊິກ ກຂອຄ ປະກອບດ້ວຍ ກະຊວງຂະແໜງການທີ່ກ່ຽວຂ້ອງ ທີ່ໄດ້ລະບຸໃນ ມາດຕາ 6 ຂອງຂໍ້ຕົກລົງສະບັບເລກທີ 023/ຄປຊ, ລົງວັນທີ 20 ຕຸລາ 2010;

5.3 ຂະແໜງການອື່ນທີ່ກ່ຽວຂ້ອງ ແມ່ນບັນດາຂະແໜງການຂອງລັດ ຮັບຜິດຊອບວຽກງານອຳນວຍຄວາມສະດວກທາງດ້ານການຄ້າ ແຕ່ບໍ່ໄດ້ຖືກລະບຸເປັນສະມາຊິກ ກຂອຄ.

ມາດຕາ 6. ຫຼັກການພື້ນຖານ

ກົນໄກການປະສານງານ ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

6.1 ຮັບປະກັນຄວາມສອດຄ່ອງກັບແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ, ແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ນະໂຍບາຍເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຂອງ ສປປ ລາວ;

6.2 ມີຄວາມໂປ່ງໃສ, ຍຸດຕິທຳ, ສະເໝີພາບ, ຫຼີກເວັ້ນການຈຳແນກ ແລະ ການສ້າງອຸປະສັກ ທີ່ບໍ່ຈຳເປັນຕໍ່ການຄ້າ;

6.3 ຮັບປະກັນຄວາມຖືກຕ້ອງ, ຊັດເຈນ, ເຊື່ອຖືໄດ້, ເຜີຍແຜ່ ແລະ ສະໜອງຂໍ້ມູນຂ່າວສານທາງດ້ານການຄ້າ ໃຫ້ທັນການ;

6.4 ເຜີຍແຜ່ຂໍ້ມູນ ກ່ຽວກັບ ບັນດານິຕິກຳ, ລະບຽບການ ແລະ ມາດຕະການຕ່າງໆ ທີ່ກຳລັງຮ່າງ ລົງໃນເວັບໄຊ໌ຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າ ເພື່ອໃຫ້ພາກສ່ວນທີ່ສົນໃຈ ທັງພາຍໃນ ແລະ ຕ່າງປະເທດ

ສາມາດປະກອບຄຳເຫັນ ກ່ອນຈະຮັບຮອງ, ພາຍໃນໄລຍະເວລາທີ່ເໝາະສົມ ໂດຍອີງຕາມການແຈ້ງບອກຂອງຂະແໜງການທີ່ກ່ຽວຂ້ອງ;

6.5 ມີການເຜີຍແຜ່ຂໍ້ມູນ ກ່ຽວກັບບັນດານິຕິກຳ, ລະບຽບການ ແລະ ມາດຕະການຕ່າງໆ ທີ່ໄດ້ຖືກຮັບຮອງ ໂດຍຜ່ານເວັບໄຊ໌ຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າ ພາຍໃນໄລຍະເວລາທີ່ເໝາະສົມ ໂດຍອີງຕາມການແຈ້ງບອກຂອງຂະແໜງການທີ່ກ່ຽວຂ້ອງ.

## ໝວດທີ II
## ໜ້າທີ່ ແລະ ຄວາມຮັບຜິດຊອບ

### ມາດຕາ 7. ໜ້າທີ່ຂອງ ຫ້ອງການປະຈຳ ກຂອຄ

7.1 ແຕ່ງຕັ້ງໜ່ວຍງານບໍລິຫານສູນຂໍ້ມູນຂ່າວສານທາງດ້ານການຄ້າ;

7.2 ນຳເອົາບັນດາຂໍ້ມູນຂ່າວສານທາງດ້ານການຄ້າທີ່ພົ້ນເດັ່ນ ທັງພາຍໃນ ແລະ ຕ່າງປະເທດ ລົງໃນເວັບໄຊ໌ຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າ ໃຫ້ທັນການ;

7.3 ນຳເອົາບັນດາຂໍ້ມູນຂ່າວສານທາງດ້ານການຄ້າ ທີ່ໄດ້ຮັບຈາກສະມາຊິກ ກຂອຄ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ ລົງໃນເວັບໄຊ໌ຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າ ໃຫ້ທັນການ;

7.4 ປັບປຸງ ຫລື ຕັດ ຂໍ້ມູນທີ່ເຜີຍແຜ່ໃນເວັບໄຊ໌ຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າ ຕາມສະພາບການປ່ຽນແປງຂອງ ຂໍ້ມູນ ແລະ ຕາມການແຈ້ງຂອງສະມາຊິກ ກຂອຄ ຕາມແຕ່ລະໄລຍະ;

7.5 ລາຍງານ ແລະ ຂໍທິດຊີ້ນຳ ຈາກຫົວໜ້າ ກຂອຄ ແລະ ສະມາຊິກ ກຂອຄ ຊາບ ກ່ຽວກັບສະພາບການຄຸ້ມຄອງບໍລິຫານ, ການນຳໃຊ້ ສູນຂໍ້ມູນຂ່າວສານທາງດ້ານການຄ້າ ເປັນແຕ່ລະໄລຍະ, ພ້ອມທັງລາຍງານສະພາບຕໍ່ ຄະນະກຳມະການປະສານງານລະດັບຊາດ ວ່າດ້ວຍການເຊື່ອມໂຍງເສດຖະກິດກັບສາກົນ (ຄປຊ) ເພື່ອຊາບ ແລະ ຂໍທິດຊີ້ນຳ ອີງຕາມຄວາມຈຳເປັນ.

### ມາດຕາ 8. ຄວາມຮັບຜິດຊອບຂອງ ຫ້ອງການປະຈຳ ກຂອຄ

8.1 ຮັບຜິດຊອບ ຕໍ່ ຜົນສຳເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ ບໍລິຫານສູນຂໍ້ມູນຂ່າວສານທາງດ້ານການຄ້າ;

8.2 ຮັບຜິດຊອບ ຕໍ່ກັບ ຄວາມຖືກຕ້ອງ ແລະ ບໍ່ຖືກຕ້ອງ ຂອງຂໍ້ມູນຂ່າວສານທາງດ້ານການຄ້າ ທີ່ໄດ້ຮັບການປັບປຸງ ໃນເວັບໄຊ໌ ຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າ;

8.3 ຮັບເອົາ ບັນດາຄຳຖາມ ຈາກຜູ້ເຂົ້າຊົມໃຊ້ເວັບໄຊ໌ຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າ ແລະ ຈັດສົ່ງໃຫ້ສະມາຊິກ ກຂອຄ ເປັນຜູ້ຕອບ ອີງຕາມເນື້ອໃນຂອງຄຳຖາມທີ່ສົ່ງມານັ້ນ;

8.4 ຮັບຄຳເຫັນ, ຄຳຕຳນິຕິຊົມ ຕໍ່ກັບ ການດຳເນີນງານຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າ ທີ່ເອົາລົງເຜີຍແຜ່ໃນເວັບໄຊ໌ ຈາກຜູ້ເຂົ້າຊົມໃຊ້ ເພື່ອນຳໄປປັບປຸງ ແລະ ພັດທະນາສູນຂໍ້ມູນຂ່າວສານດັ່ງກ່າວ ຢ່າງຕໍ່ເນື່ອງ;

8.5 ຄຸ້ມຄອງບໍລິຫານເວັບໄຊ໌ຂອງສູນຂໍ້ມູນຂ່າວສານທາງດ້ານການຄ້າ ໃຫ້ມີຄວາມຍືນຍົງ ແລະ ພັດທະນາຢ່າງຕໍ່ເນື່ອງ ເພື່ອໃຫ້ສາທາລະນະຊົນໄດ້ຊົມໃຊ້ ຢ່າງເປັນປົກກະຕິ.

### ມາດຕາ 9. ໜ້າທີ່ຂອງ ສະມາຊິກ ກຂອຄ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ

9.1 ແຕ່ງຕັ້ງພະນັກງານ ທີ່ສັງກັດຢູ່ກົມກອງຂອງຕົນ ເພື່ອເປັນຈຸດປະສານງານ ໃນການສະໜອງຂໍ້ມູນຂ່າວສານທາງດ້ານການຄ້າ ທີ່ຕິດພັນກັບຂະແໜງການຂອງຕົນ ໃຫ້ແກ່ສູນຂໍ້ມູນຂ່າວສານທາງດ້ານການຄ້າ;

9.2 ປະສານງານກັນຢ່າງຕໍ່ເນື່ອງ ກັບ ຫ້ອງການປະຈໍາ ກຂອຄ ໂດຍຜ່ານຈຸດປະສານງານຂອງຕົນ ເພື່ອແຈ້ງໃຫ້ຊາບ ບັນຫາສໍາຄັນຕ່າງໆ ທີ່ຕິດພັນກັບ ການປ່ຽນແປງ ປັບປຸງນະໂຍບາຍ ຫລື ລະບຽບການ ທາງດ້ານການຄ້າ ທີ່ຄວນເຜີຍແຜ່ໃຫ້ແກ່ສາທາລະນະຊົນໄດ້ຮັບຊາບ;

9.3 ແຈ້ງໃຫ້ຫ້ອງການປະຈໍາ ກຂອຄ ຊາບ ກ່ອນລ່ວງໜ້າ ກ່ຽວກັບ ຂໍ້ມູນຂ່າວສານທາງດ້ານການຄ້າ ທີ່ມີແຜນຈະນໍາເຜີຍແຜ່ສູ່ສາທາລະນະຊົນ;

9.4 ແຈ້ງໃຫ້ ຫ້ອງການປະຈໍາ ກຂອຄ ຊາບ ທັນທີ ກ່ຽວກັບ ຄວາມບໍ່ຖືກຕ້ອງ ຫລື ການຂາດຫາຍ ຂອງຂໍ້ມູນທີ່ເອົາລົງເຜີຍແຜ່ ໃນສູນຂໍ້ມູນຂ່າວສານທາງດ້ານການຄ້າ ລວມທັງຂໍ້ມູນທີ່ບໍ່ໄດ້ຖືກນໍາໃຊ້ອີກຕໍ່ໄປ.

### ມາດຕາ 10. ຄວາມຮັບຜິດຊອບຂອງ ສະມາຊິກ ກຂອຄ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ

10.1 ຮັບຜິດຊອບ ຕໍ່ກັບ ຜົນສໍາເລັດ ແລະ ຂໍ້ຂາດຕົກບົກພ່ອງ ໃນການຈັດຕັ້ງປະຕິບັດວຽກງານສະໜອງຂໍ້ມູນຂ່າວສານ ໃຫ້ແກ່ ຫ້ອງການປະຈໍາ ກຂອຄ;

10.2 ຮັບຜິດຊອບ ຕໍ່ກັບ ຄວາມຖືກຕ້ອງ ແລະ ບໍ່ຖືກຕ້ອງ ຂອງຂໍ້ມູນຂ່າວສານທາງດ້ານການຄ້າ ທີ່ສົ່ງໃຫ້ຫ້ອງການປະຈໍາ ກຂອຄ;

10.3 ສະໜອງຂໍ້ມູນໃນຮູບແບບເອເລັກໂຕຣນິກ (electronic format) ເພື່ອເປັນການສະດວກໃນການເອົາລົງໃນສູນຂໍ້ມູນຂ່າວສານທາງດ້ານການຄ້າ;

10.4 ຕອບຄໍາຖາມຕ່າງໆ ທີ່ໄດ້ຮັບຈາກຜູ້ເຂົ້າຊົມໃຊ້ສູນຂໍ້ມູນຂ່າວສານດັ່ງກ່າວ ທີ່ສົ່ງໃຫ້ໂດຍຫ້ອງການປະຈໍາ ກຂອຄ ແລະ ແຈ້ງໃຫ້ຫ້ອງການປະຈໍາ ກຂອຄ ຊາບ ກ່ຽວກັບຄວາມຄືບໜ້າຂອງການຕອບຄໍາຖາມນັ້ນ.

### ມາດຕາ 11. ວິທີແກ້ໄຂບັນຫາ

ໃນກໍລະນີ ການປະສານງານລະຫວ່າງ ຫ້ອງການປະຈໍາ ກຂອຄ ກັບ ສະມາຊິກ ກຂອຄ ແລະ ຂະແໜງການອື່ນໆທີ່ກ່ຽວຂ້ອງ ຫາກບໍ່ໂລ່ງລ່ຽນ ທີ່ເປັນສາເຫດໃຫ້ບໍ່ສາມາດຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ແມ່ນໃຫ້ ທ່ານ ຫົວໜ້າ ກຂອຄ ລາຍງານຕໍ່ ຄປຊ ຊາບ ເພື່ອຂໍທິດຊີ້ນໍາ ແລະ ມີທິດທາງແກ້ໄຂ ຕາມເຫັນສົມຄວນ.

### ມາດຕາ 12. ແບບແຜນວິທີເຮັດວຽກ

ຫ້ອງການປະຈໍາ ກຂອຄ ລາຍງານຂໍທິດຊີ້ນໍາຈາກຫົວໜ້າ ກຂອຄ ເປັນແຕ່ລະໄລຍະ ກ່ຽວກັບ ການຈັດຕັ້ງປະຕິບັດກົນໄກການປະສານງານ ແລະ ການເຜີຍແຜ່ຂໍ້ມູນຂ່າວສານທາງດ້ານການຄ້າ ເຂົ້າໃນສູນຂໍ້ມູນຂ່າວສານທາງດ້ານການຄ້າ;

ສະມາຊິກ ກຂອຄ ລາຍງານຂໍທິດຊີ້ນໍາຈາກຂັ້ນເທິງຂອງຕົນ ເປັນແຕ່ລະໄລຍະ ກ່ຽວກັບ ການຈັດຕັ້ງປະຕິບັດການສະໜອງຂໍ້ມູນຂ່າວສານທາງດ້ານການຄ້າ ໃຫ້ແກ່ຫ້ອງການປະຈໍາ ກຂອຄ ລວມທັງ ການຕອບຄໍາຖາມຂອງສາທາລະນະຊົນ;

ກຂອຄ ຈະລາຍງານຄວາມຄືບໜ້າ ຂອງວຽກງານສະໜອງຂໍ້ມູນຂ່າວສານທາງດ້ານການຄ້າ ໃຫ້ ຄປຊ ກໍຄືລັດຖະບານ ຊາບ ໃນແຕ່ລະໄລຍະ.

### ມາດຕາ 13. ງົບປະມານໃນການເຄື່ອນໄຫວ

ງົບປະມານໃນການເຄື່ອນໄຫວຂອງ ການຈັດຕັ້ງກົນໄກການປະສານງານ ໃນການສະໜອງຂໍ້ມູນຂ່າວສານທາງດ້ານການຄ້າ ແມ່ນນໍາໃຊ້ງົບປະມານສ່ວນໜຶ່ງຂອງ ກຂອຄ ທີ່ໄດ້ລະບຸໄວ້ໃນ ມາດຕາ 11 ຂອງຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກອງເລຂາອໍານວຍຄວາມສະດວກທາງດ້ານການຄ້າ ສະບັບເລກທີ 023/ຄປຊ, ລົງວັນທີ 20 ຕຸລາ 2010.

ໝວດທີ III
ບົດບັນຍັດສຸດທ້າຍ

ມາດຕາ 14. ການຈັດຕັ້ງປະຕິບັດ

ມອບໃຫ້ ສະມາຊິກ ກຂອຄ ແລະ ບັນດາກະຊວງຂະແໜງການອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ເປັນເຈົ້າການຈັດຕັ້ງ ເຜີຍແຜ່ ແລະ ປະຕິບັດໜ້າທີ່ຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 15. ຜົນບັງຄັບໃຊ້

ຂໍ້ຕົກລົງສະບັບນີ້ ມີຜົນບັງຄັບໃຊ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຮອງນາຍົກລັດຖະມົນຕີ,
ລັດຖະມົນຕີວ່າການກະຊວງການຕ່າງປະເທດ,
ປະທານ ຄປຊ.

ກະຊວງການຕ່າງປະເທດ
ລັດຖະມົນຕີ

ທອງລຸນ ສີສຸລິດ